# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 7 ກັນຍາ 2008 (9-7-2008)

---

## ອະພັຍໃຫ້ຢ່າງໄວແລະອະພັຍໃຫ້ສເມີ

**ຂໍ້ພຣະຄັມພີໃນບົດຮຽນ:** ມັດທາຍ 18: 21-35

### ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ

ທ່ານຈະຖືກທ້າທາຍໃຫ້ອະພັຍແກ່ຄົນອື່ນໆໂດຍບໍ່ມີຂອບເຂດຈຳກັດເພາະວ່າທ່ານກໍໄດ້ຮັບການໃຫ້ອະພັຍຈາກພຣະເຈົ້າຢ່າງບໍ່ມີຂອບເຂດຈຳກັດ.

### ບົດຮຽນນີ້ເວົ້າກ່ຽວກັບຫຍັງ

ຄວາມຫມາຍແທ້ຂອງການສິດສອນຂອງພຣະເຢຊູຕໍ່ພວກສາວົກຂອງພຣະອົງ ເຣື່ອງການປະຕິບັດແລະສັມພັນກັບຄົນອື່ນ(ມັດທາຍ 18:1-20), ເປໂຕໄດ້ຖາມເຖິງຈຳນວນຂອບເຂດທີ່ລາວຕ້ອງອະພັຍໃຫ້ແກ່ພີ່ນ້ອງ. ພຣະເຢຊູໄດ້ບອກເປັນຄຳອຸປມາເຣື່ອງຂ້າໃຊ້ທີ່ບໍ່ຍອມໃຫ້ອະພັຍແກ່ຜູ້ອື່ນ ແລະເນັ້ນຫນັກແກ່ຜູ້ທີ່ຕິດຕາມພຣະອົງວ່າບໍ່ຄວນມີຂອບເຂດຈຳກັດຕໍ່ການໃຫ້ອະພັຍຂອງພວກເຂົາ.

### ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ

ການແກ້ແຄ້ນຄອບງຳຢູ່ຕລອດມື້, ປະເທດຕໍ່ປະເທດກໍໃຊ້ການຍຸ-ແຍ່ທາງການເມືອງ. ພວກສມັກຫາສຽງດ້ານການເມືອງກໍໂຕ້ຕອບການໂຄສະນາຂອງຄູ່ແຂ່ງດ້ວຍຕົວເອງ. ບາງທີສິ່ງທີ່ນ້ອຍທີ່ສຸດໃນຊີວິດຂອງຄົນແກ່ກະສຽນກໍສາມາດເຮັດໃຫ້ພວກເຂົາເສັຽຊີວິດໄດ້. ແມ້ແຕ່ໃນຄຣິສຕະຈັກ, ຊຶ່ງເປັນພຣະກາຍຂອງພຣະຄຣິດ, ບາງຄົນກໍເກັບຄວາມເຈັບແຄ້ນທີ່ມີຕໍ່ຄົນອື່ນໄວ້ເປັນປີໆ, ເກັບຮັກສາຄວາມເຂົ້າໃຈຜິດ ໄວ້ຢ່າງຈິງຈັງ.

ພາບນຶ່ງທີ່ບໍ່ສາມາດລືມໄດ້ໃນສົງຄາມວຽດນາມຄືພາບຂອງແຟນທິກິມຟຶກ, ເດັກຍິງອາຍຸ 9 ປີທີ່ປະເປືອຍທີ່ຖືກໄຫມ້ກຳລັງແລ່ນຜ່າຍລູກລະເບີດເນປາມ. ໃນປີ 1972, ຈອນ ພະລຳເມີ ຊຶ່ງເປັນຫົວຫນ້າຂະບວນໄປຖິ້ມລະເບີດໃສ່ບ້ານ ທແຮງບັງ ຫລັງຈາກໄດ້ຮັບລາຍງານເຖິງສອງເທື່ອວ່າບໍ່ມີປະຊາຊົນທີ່ນັ້ນ. ພາບຂອງນາງກິມຟຶກທີ່ກຳລັງແລ່ນໃນບ້ານນັ້ນກໍຫລອກຫລອນລາວ ແລະລາວກໍຢາກໄປຂໍອະພັຍໂທດກັບລາວເປັນການສ່ວນຕົວ. ຫລັງຈາກນັ້ນ,ພະລຳເມີ ໄດ້ກາຍເປັນຄຣິສຕຽນແລະເປັນຜູ້ຮັບໃຊ້ພຣະເຈົ້າ. ໃນປີ 1996, ລາວໄດ້ຊາບວ່າ ກິມຟຶກ ໄດ້ມາອາສັຍຢູ່ທີ່ເມືອງໂຕຣົນໂຕ ປະເທດການາດາ. ຫລັງຈາກນັ້ນມາບໍ່ດົນ, ລາວກໍຮູ້ລາຍລະອຽດເຖິງພັຍວິບັດທັງຫມົດທີ່ໄດ້ເກີດຂຶ້ນກັບລາວ, ນາງກິມຟຶກໄດ້ນອນຢູ່ໂຮງຫມໍເຖິງ 14 ເດືອນ, ແລະສູນເສັຍສະມາຊິກໃນຄອບຄົວອີກຫລາຍຄົນ.

ເມື່ອກິມຟຶກມາກ່າວປາສັຍເນື່ອງໃນງານຈົດຈຳພວກນັກຮົບເກົ່າວຽດນາມທີ່ວໍຊິງຕັນດີຊີ. ພະລຳເມີກໍ ໄດ້ໄປຟັງລາວ. ລາວໄດ້ຍິນກິມຟຶກເວົ້າວ່າຖ້າລາວໄດ້ພົບນັກບິນຄົນນັ້ນລາວກໍຈະຍົກໂທດໃຫ້. ພະລຳເມີຍັງຈົດຈຳການພົບປະກັນຕອນນັ້ນໄດ້ດີລາວອ້າແຂນໂອບກອດຂ້ອຍ. ຂ້ອຍສາມາດເວົ້າໄດ້ແຕ່ພຽງວ່າຂ້ອຍຂໍໂທດ ຂ້ອຍຂໍໂທດ ຂ້ອຍຂໍໂທດເວົ້າຊ້ຳແລ້ວຊ້ຳອີກ. ໃນຂນະດຽວກັນ, ລາວໄດ້ເວົ້າວ່າ "ບໍ່ເປັນຫຍັງ ດອກ; ບໍ່ເປັນຫຍັງດອກ; ຂ້ອຍອະພັຍໃຫ້ແລ້ວຂ້ອຍອະພັຍໃຫ້ແລ້ວ." ເຄີຍເຕີບໂຕໃນສາສນາພຸດ, ກິມຟຶກໄດ້ກາຍ

ເປັນຜູ້ເຊື່ອໃນພຣະເຢຊູຄຣິດໃນປີ 1982, ແລະໄດ້ຮຽນບົດຮຽນທີ່ສຳຄັນຄືການໃຫ້ອະພັຍໂທດ. (ຄັດອອກມາຈາກ Fresh Illustrations for Preaching and Teaching; From Leadership Journal, edited by Edward K. Rowell, Grand Rapids; Baker Book House,1997, ຫນ້າທີ76-77.)

ໃນບົດຮຽນຂອງພວກເຮົາໃນມື້ນີ້, ພວກເຮົາຈະສຳຣວດເບິ່ງເຣື່ອງທີ່ພຣະເຢຊູກ່າວ ກ່ຽວກັບຄວາມສຳຄັນຂອງການອະພັຍໂທດແກ່ຄົນອື່ນ ແລະການອະພັຍໂທດຂອງພວກເຮົາບໍ່ຄວນມີຂອບເຂດຈຳກັດ ເພາະວ່າພວກເຮົາໄດ້ຮັບການໃຫ້ອະພັຍໂທດຈາກພຣະເຈົ້າຢ່າງບໍ່ມີຂອບເຂດຈຳກັດ.

## <u>ສຶກສາພຣະຄັມພີ</u>

**1. <u>ຫນີ້ຖືກຍົກເລີກ</u>** (ມັດທາຍ 18: 21-27)

ພວກຄຣູສອນສາສນາຍິວໃນສມັຍພຣະເຢຊູເປັນມະນຸດຢູ່ນັ້ນໄດ້ສອນວ່າການໃຫ້ອະພັຍໂທດແກ່ຜູ້ອື່ນເຖິງສາມເທື່ອກໍພໍແລ້ວ. ເປໂຕຫລັງຈາກທີ່ໄດ້ຟັງການສິດສອນຂອງພຣະເຢຊູກ່ຽວເຣື່ອງການສ້າງຕັ້ງພີ່ນ້ອງທີ່ໄດ້ເຮັດບາບຕໍ່ຊຶ່ງກັນແລະກັນ(ມັດທາຍ 18:15-20), ໄດ້ຖາມພຣະເຢຊູວ່າຖ້າອະພັຍໂທດໃຫ້ຄົນອື່ນຮອດເຈັດເທື່ອກໍຄວນພໍແລ້ວບໍ່. ມີບາງຄັ້ງ, ພຣະເຢຊູໄດ້ສອນເຖິງການໃຫ້ອະພັຍແກ່ຄົນອື່ນຄວນຈະເຮັດຢໍ້າອີກເຈັດເທື່ອໃນມື້ນັ້ນຖ້າຫາກຈຳເປັນ(ລູກາ 17:4). ການໃຫ້ອະພັຍແກ່ຜູ້ອື່ນເຖິງເຈັດເທື່ອຖືວ່າຫລາຍເກີນໄປແລ້ວສຳລັບການສອນຂອງພວກຄຣູສອນສາສນາ.

ພຣະເຢຊູໄດ້ສອນວ່າການໃຫ້ອະພັຍບໍ່ຄວນມີກຳນົດຂອບເຂດ, ເປໂຕຄິດວ່າເຈັດເທື່ອກໍຫລາຍຢູ່ແລ້ວ, ແຕ່ວ່າເຈັດສິບຄູນເຈັດ, ຖ້າຫຍຸບໃສ່ກັນກໍບໍ່ມີບ່ອນສຸດ. ພຣະເຢຊູຢາກໃຫ້ພວກສາວົກຂອງພຣະອົງຮູ້ວ່າໃນແຜ່ນດິນສວັນ, ການໃຫ້ອະພັຍບໍ່ພຽງແຕ່ເປັນການກະທຳເທົ່ານັ້ນ, ແຕ່ວ່າມັນເປັນນິສັຍ. ເພື່ອຢໍ້າໃຫ້ເຂົ້າໃຈວ່າເປັນຫຍັງການໃຫ້ອະພັຍໂທດຈຶ່ງບໍ່ມີກຳນົດຂອບເຂດ, ພຣະເຢຊູຈຶ່ງກ່າວເປັນຄຳອຸປມາເຣື່ອງຂ້າໃຊ້ທີ່ບໍ່ໃຫ້ອະພັຍແກ່ຜູ້ອື່ນ.

ກະສັດອົງນຶ່ງຊົງປະສົງຢາກຄິດບັນຊີເງິນທີ່ພວກຂ້າໃຊ້ເປັນຫນີ້. ໃນຂນະນີ້ກໍມີຂ້າໃຊ້ຄົນນຶ່ງຢືນຢູ່ຕໍ່ຫນ້າກະສັດເປັນຫນີ້ຈຳນວນຫລວງຫລາຍຄື 10 000 ຕາລັນຕົນ. ຈຳນວນເງິນນີ້ອາດຈະແປໄດ້ວ່າ "ນັບບໍ່ໄດ້,"ແລະເປັນຈຳນວນທີ່ບໍ່ສາມາດຈະຈ່າຍຄືນໃຫ້ໄດ້. ພວກເຮົາສາມາດເວົ້າໄດ້ວ່າລາວຕິດຫນີ້ "ນຶ່ງໂກດໂດລາ."

ກະສັດຄິດຢາກຈະຂາຍຂ້າໃຊ້ຄົນນັ້ນ, ຄອບຄົວຂອງລາວແລະທຸກສິ່ງທີ່ລາວມີຢູ່ເພື່ອມາໃຊ້ຫນີ້. ເຖິງປານນັ້ນກະສັດອົງນັ້ນກໍບໍ່ສາມາດໄດ້ເງິນຄືນທັງຫມົດຈາກການຂາຍຂ້າໃຊ້ຄົນນັ້ນ, ການທີ່ຈະເຮັດຢ່າງນັ້ນກໍຫ່ຽງທັມຢູ່ແລ້ວ. ແຕ່ວ່າ, ຂ້າໃຊ້ຄົນນັ້ນກົ້ມຂາບລົງອ້ອນວອນຂໍເວລາເພື່ອຫາເງິນມາໃຊ້ຫນີ້ຄືນ. ກະສັດມີຄວາມສົງສານແລະໂຕ້ຕອບເກີນຄວາມຄາດຫມາຍຂອງຂ້ອຍໃຊ້ຜູ້ນັ້ນ. ກະສັດອົງນັ້ນປ່ອຍໃຫ້ລາວໄປແລະກໍຍົກຫນີ້ໃຫ້ດ້ວຍ. ເຖິງຢ່າງໃດກໍຕາມ, ກະສັດອົງນັ້ນເຕັມໃຈທີ່ຈະເສັຍເງິນຂອງຕົນ. ການກະທຳຂອງກະສັດອົງນັ້ນແມ່ນເກີນຄວາມເຂົ້າໃຈແລະສະແດງໃຫ້ເຫັນເຖິງການອະພັຍໂທດທີ່ບໍ່ມີຂອບເຂດຈຳກັດ.

ພຣະເຈົ້າເຕັມພຣະທັຍທີ່ຈະຍົກຫນີ້ຄວາມບາບໃຫ້ແກ່ພວກເຮົາຊຶ່ງເປັນສິ່ງທີ່ອັສຈັນແລະເກີນຄວາມເຂົ້າໃຈຕໍ່ການກະທຳທີ່ເຕັມດ້ວຍພຣະຄຸນແລະຄວາມເມດຕາກະຣຸນາ. ໂປໂລກ່າວໄວ້ດັ່ງນີ້, "ດ້ວຍວ່າທຸກ

ຄົນເປັນຄົນຜິດບາບແລະຂາດຈາກພຣະຣັສມີຂອງພຣະເຈົ້າ" (ໂຣມ 3:23) ແລະ "ຄ່າຈ້າງຂອງຄວາມຜິດບາບຄືຄວາມຕາຍ, ແຕ່ຂອງ ພຣະຣາຊທານອັນໂຜດມາແຕ່ພຣະເຈົ້າຄືຊີວິດອັນຕລອດໄປເປັນນິດໃນພຣະຄຣິດຄືພຣະເຢຊູເຈົ້າຂອງພວກເຮົາ" (ໂຣມ 6:23). ເພາະວ່າພວກເຮົາທຸກຄົນໄດ້ເປັນຄົນຜິດບາບ, ພວກເຮົາທັງຫມົດຈຶ່ງເປັນຫນີ້ພຣະເຈົ້າທີ່ບໍ່ສາມາດທີ່ຈະໃຊ້ຄືນໄດ້. ອັນທີ່ນຶ່ງ, ພວກເຮົາຕ້ອງຍອມຮັບວ່າພວກເຮົາເປັນຄົນຜິດບາບແລະຕ້ອງການຄວາມໃຫ້ອະພັຍໂທດ. ຕໍ່ຈາກນັ້ນ, ພວກເຮົາຕ້ອງເຊື່ອວ່າພຣະເຢຊູເປັນພຣະບຸດຂອງພຣະເຈົ້າແລະໂດຍຜ່ານທາງພຣະອົງເທົ່ານັ້ນຈຶ່ງຈະມີການໃຫ້ອະພັຍໂທດ. ອັນທີສາມ, ພວກເຮົາຕ້ອງສາຣະພາບວ່າພຣະອົງເປັນພຣະເຈົ້າແລະພຣະຜູ້ຊ່ວຍໃຫ້ລອດພົ້ນ. ຫລັງຈາກນັ້ນພຣະເຈົ້າກໍຈະປະທານການອະພັຍໂທດທີ່ບໍ່ມີຂອບເຂດຈຳກັດແລະຄວາມລອດພົ້ນບາບແກ່ພວກເຮົາ. ຂອງພຣະຣາຊທານນີ້ແມ່ນຄິດຄ່າຈາກຄວາມທໍຣະມານແລະຄວາມຕາຍຂອງພຣະຄຣິດ. ການໃຫ້ອະພັຍທີ່ແທ້ຈິງນັ້ນຈຳເປັນທີ່ຜູ້ໃຫ້ອະພັຍນັ້ນຕ້ອງມີຄວາມຮັກຫລືມີໃຈສົງສານແກ່ຜູ້ທີ່ຕ້ອງການຄວາມໃຫ້ອະພັຍໂທດ. ຍັງບໍ່ພຽງແຕ່ເທົ່ານັ້ນຜູ້ທີ່ໃຫ້ອະພັຍແກ່ຄົນອື່ນຕ້ອງຍອມຮັບເອົາຄວາມເຈັບປວດທີ່ຜູ້ໄດ້ເຮັດຜິດກໍ່ຂຶ້ນ. ໃນຄຳອຸປມາ, ກະສັດອົງນັ້ນຍອມຮັບເອົາ "ຄວາມເຈັບປວດ" ຄືເສັຽເງິນເພື່ອຂ້າໃຊ້ຈະບໍ່ເປັນຫນີ້ອີກຕໍ່ໄປ. ໃນຄວາມສົງສານຂອງພຣະອົງ, ພຣະເຢຊູຍອມທົນທຸກທໍຣະມານແລະຍອມຕາຍ,ປະສົບການກັບຄວາມເຈັບປວດຂອງຄວາມຜິດບາບຢ່າງເຕັມຂນາດ, ເພື່ອຄວາມຜິດບາບຂອງພວກເຮົາຈະໄດ້ຮັບການໃຫ້ອະພັຍ. ການໃຫ້ອະພັຍມີຄ່າແພງຫລາຍ, ແຕ່ບໍ່ຄວນມີຂອບເຂດຈຳກັດ-ຄືດັ່ງທີ່ພຣະເຈົ້າໄດ້ຍົກໂທດໃຫ້ແກ່ພວກເຮົາ ໂດຍຜ່ານພຣະຄຣິດ.

2. **<u>ຫົວໃຈແຂງກະດ້າງ</u>** (ມັດທາຍ 18: 28-30)

ຂ້າໃຊ້ຄົນນັ້ນເມື່ອອອກຈາກພຣະຣາຊວັງຂອງກະສັດແລ້ວກໍໄດ້ພົບກັບເພື່ອນຂ້າໃຊ້ດ້ວຍກັນທີ່ຕິດຫນີ້ລາວນຶ່ງຮ້ອຍເດນາຣິອົນ. ນຶ່ງເດນາຣິອົນກໍມີມູນຄ່າເທົ່າກັບຄ່າເຮັດວຽກຂອງມື້ນຶ່ງ(ມັດທາຍ 20:1-16). ຖ້າສົມທຽບກັບຫນີ້ທີ່ກະສັດໄດ້ຍົກເລີກໃຫ້ລາວແມ່ນເປັນຈຳນວນທີ່ຫນ້ອຍທີ່ສຸດ.

ແທນທີ່ລາວຈະຝຶກແອບຈາກປະສົບການທີ່ລາວໄດ້ປະເຊີນຜ່ານມາ, ຂ້າໃຊ້ຄົນນັ້ນກໍຂົ່ມເຫງຄົນອື່ນດ້ວຍກຳລັງຂອງລາວເອງ, ແລະອອກຄຳສັ່ງຢ່າງເດັດຂາດໃຫ້ໃຊ້ຫນີ້ຄືນໂດຍດ່ວນ. ເພື່ອນຂ້າໃຊ້ຄົນນັ້ນກໍກົ້ມຫມູບຫນ້າແລະຂໍຮ້ອງຄວາມເມດຕາຈາກລາວ. ຂນະທີ່ຂ້າໃຊ້ທີ່ຖືກຍົກໂທດຈາກກະສັດໄດ້ໃຊ້ວິທີການອັນດຽວກັນໃນການຂໍຄວາມເມດຕາກະຣຸນາຢ່າງຫນ້ອຍລາວກໍຄົງຈະສຳນຶກໄດ້ຈາກປະສົບການທີ່ລາວໄດ້ພົບເມື່ອບໍ່ນານມານັ້ນ. ແຕ່ວ່າ, ຂ້າໃຊ້ທີ່ໄດ້ຮັບການໃຫ້ອະພັຍຜູ້ນັ້ນອອກຄຳສັ່ງຢ່າງບໍ່ປະນີປະນອມແລະເອົາເພື່ອນໄປໃສ່ຄຸກຈົນກວ່າຈະໃຊ້ຫນີ້ໃຫ້ຈົນຫມົດ.

ຂ້າໃຊ້ຄົນທຳອິດນັ້ນໄດ້ຮັບການໃຫ້ອະພັຍໂທດອັນໃຫຍ່ຫລວງ, ລາວບໍ່ສະແດງຄວາມກະຣຸນາຕໍ່ຂ້າໃຊ້ຄົນທີ່ສອງທີ່ເປັນຫນີ້ຕົນພຽງເລັກຫນ້ອຍ. ລາວໄດ້ລືມປະສົບການທີ່ລາວໄດ້ຮັບພຣະຄຸນແລະການອະພັຍໂທດຈາກກະສັດອົງນັ້ນຢ່າງຮີບດ່ວນ. ຄວາມປະພຶດທີ່ຂາດມາຣະຍາດຂອງລາວນັ້ນກໍຖືກຕ້ອງຕາມກົດລະບຽບຢູ່. ແຕ່ວ່າຖ້າຫາກເວົ້າເຖິງພຣະຄຸນ, ຄວາມເມດຕາ, ແລະການໃຫ້ອະພັຍໂທດ-ການກະທຳແລະນິສັຍຂອງລາວແມ່ນບໍ່ສາມາດແກ້ຕົວໄດ້. ໂດຍທີ່ບໍ່ສາມາດອະພັຍໂທດໃຫ້ແກ່ເພື່ອນຂ້າໃຊ້ດ້ວຍກັນແລະບໍ່ຍອມຝຶກແອບໃຊ້ຄວາມທ່ຽງທຳດ້ານຄວາມເມດຕາກະຣຸນາ, ຂ້າໃຊ້ຄົນທີ່ນຶ່ງໄດ້ຕັດສິນໃຈເຮັດສິ່ງທີ່ຫນ້າອັບອາຍ

ຕໍ່ຂ້າໃຊ້ຄົນທີ່ສອງ.

ໃນຖານະທີ່ພວກເຮົາເປັນຜູ້ທີ່ມີຄວາມເຊື່ອ, ພວກເຮົາຕ້ອງເບິ່ງພວກທີ່ເຮັດຜິດຕໍ່ພວກເຮົາໃນແງ່ຂອງຄວາມເມດຕາກະຣຸນາແທນທີ່ຈະເຮັດຕາມກົດລະບຽບ. ຕາມກົດລະບຽບແລ້ວຜູ້ທີ່ເປັນໜີ້ຄົນອື່ນຕ້ອງໄດ້ໃຊ້ໜີ້(ບາບ)ນັ້ນຈົນໝົດ. ໂດຍຜ່ານທາງແຫ່ງພຣະຄຸນ, ຄວາມເມດຕາສົງສານເນັ້ນເຈາະຈົງໃສ່ຜູ້ທີ່ເປັນເຈົ້າຂອງໜີ້ບໍ່ແມ່ນແຕ່ໜີ້ຢ່າງດຽວ. ການຍົກໂທດຂອງພຣະເຈົ້າຕໍ່ໜີ້ອັນໃຫຍ່ຫລວງ(ບາບ)ຂອງພວກເຮົາຊີ້ບອກໃຫ້ພວກເຮົາຝຶກແອບການໃຫ້ອະພັຍແກ່ຜູ້ອື່ນຢ່າງບໍ່ມີຂອບເຂດຈຳກັດ ຕໍ່ຜູ້ທີ່ເຮັດຜິດຕໍ່ພວກເຮົາ. ຄວາມຜິດຕ່າງໆທີ່ຄົນອື່ນເຮັດຕໍ່ພວກເຮົານັ້ນມັນນ້ອຍເກີນໄປ ຖ້າທຽບໃສ່ຄວາມບາບທີ່ພວກເຮົາມີຕໍ່ພຣະເຈົ້າ. ພຣະເຢຊູໄດ້ສິດສອນສາວົກຂອງພຣະອົງໃຫ້ອະທິຖານ, "ຂໍຊົງໂຜດຍົກໂທດໃຫ້ຂ້າພຣະອົງເຫມືອນຂ້າພຣະອົງຍົກໂທດໃຫ້ແກ່ຜູ້ທີ່ເຮັດຜິດຕໍ່ຂ້າພຣະອົງນັ້ນ" (ມັດທາຍ 6:12). ຖ້າວ່າພວກເຮົາຈະຂໍຄວາມເມດຕາແລະການອະພັຍໂທດຈາກອົງພຣະຜູ້ເປັນເຈົ້າ, ພວກເຮົາຕ້ອງເຕັມໃຈໃຫ້ຄວາມເມດຕາແລະການອະພັຍໂທດໃຫ້ແກ່ຜູ້ອື່ນດ້ວຍ. ຖ້າວ່າພວກເຮົາຫາກບໍ່ສາມາດຍົກໂທດໃຫ້ແກ່ຜູ້ອື່ນຫລັງຈາກທີ່ພຣະຜູ້ເປັນເຈົ້າຊົງຍົກໂທດໃຫ້ແກ່ພວກເຮົາແລ້ວ, ພວກເຮົາຢືນຢູ່ໃນຂັ້ນອັນຕລາຍຄືໃນການພິພາກສາຂອງພຣະເຈົ້າຕໍ່ສິ່ງທີ່ໜ້າອັບອາຍທີ່ພວກເຮົາໄດ້ເຮັດຕໍ່ພຣະຄຸນຂອງພຣະອົງແລະຕໍ່ຜູ້ອື່ນໆ.

3. **<u>ຫວັງຈະໄດ້ຮັບການໃຫ້ອະພັຍໂທດ</u>** (ມັດທາຍ 18:31-35)

ເພື່ອນຂ້າໃຊ້ຄົນອື່ນໆໄດ້ເຫັນເຫດການທີ່ຂ້າໃຊ້ຄົນທຳອິດທີ່ໄດ້ເຮັດຕໍ່ຂ້າໃຊ້ຄົນທີ່ສອງກໍພາກັນ**ເປັນທຸກຂັ້ມໃຈ**ຕໍ່ເຫດການທີ່ເກີດຂຶ້ນແລ້ວກໍໄປລາຍງານຕໍ່ກະສັດ. ບາງທີພວກເຂົາເຫລົ່ານີ້ກໍແມ່ນຂ້າໃຊ້ທີ່ຖືກຮ້ອງໃຫ້ເຂົ້າມາຄິດບັນຊີໜີ້ຂອງພວກເຂົາ(ຂໍ້ 23)ແລະເປັນພຍານຕໍ່ຄວາມເມດຕາກະຣຸນາທີ່ກະສັດມີຕໍ່ຂ້າໃຊ້ຄົນທີ່ນຶ່ງນັ້ນ. ອັນນີ້ກໍແນ່ນອນວ່າມັນຍິ່ງຈະເພີ້ມຄວາມເຈັບປວດລວດລ້າວຂອງພວກເຂົາ, ຖ້າວ່າຫາກບໍ່ເຫນືອກວ່າການເຮັດຕໍ່ຂ້າໃຊ້ຄົນທີ່ສອງໄດ້ຮັບນັ້ນ.

ຫລັງຈາກທີ່ໄດ້ຍິນຄຳລາຍງານ, ກະສັດກໍອອກຄຳສັ່ງໃຫ້ນຳຕົວຂ້າໃຊ້ຄົນທີ່ນຶ່ງເຂົ້າມາພົບແລະຮ້ອງຜູ້ນັ້ນວ່າ**ຂ້າໃຊ້ຊົ່ວ**ຜູ້ທີ່ບໍ່ສະແດງຄວາມເມດຕາກະຣຸນາຕໍ່ຜູ້ອື່ນເຫມືອນດັ່ງທີ່ຕົນໄດ້ຮັບ. ກະສັດອົງນັ້ນຍັງໄດ້ອອກຄຳສັ່ງໃຫ້ນຳຂ້າໃຊ້ຄົນທີນຶ່ງນັ້ນຈຳຄຸກ, ແລະມອບໄວ້ກັບ**ນາຍທັມມະໂຣງຈົນ**ກວ່າຜູ້ນັ້ນຈະ**ໃຊ້ໜີ້ເກົ່ານັ້ນໃຫ້ຈົນໝົດ**. ໃນຂນະທີ່ການໃຊ້ໜີ້ທີ່ມັນເປັນໄປບໍ່ໄດ້ຢູ່ແລ້ວ, ປີການທີ່ຈະຢູ່ໃນຄຸກຄົງບໍ່ມີວັນສິ້ນສຸດເປັນແນ່.

ເມື່ອພວກທີ່ມີຄວາມເຊື່ອປະສົບການການໃຫ້ອະພັຍໂທດທີ່ບໍ່ມີອັນໃດປຽບໄດ້ຈາກພຣະເຈົ້າແຕ່ປະຕິເສດທີ່ຈະໃຫ້ອະພັຍໂທດແກ່ຜູ້ທີ່ເຮັດຜິດຕໍ່ພວກເຂົາແລ້ວ, ກໍເຫມືອນກັບວ່າພວກເຂົາຖືກຄຸກແຫ່ງຄວາມຂົມຂື່ນ. ສິ່ງແນວນີ້ບໍ່ຄວນຈະເກີດຂຶ້ນກັບພົລເມືອງແຫ່ງຣາຊອານາຈັກສວັນ, ພຣະເຈົ້າປະທານການໃຫ້ອະພັຍໂທດທີ່ບໍ່ມີຂອບເຂດຈຳກັດໃນຣາຊອານາຈັກ, ດັ່ງນັ້ນການປະພຶດທີ່ຖືກຕ້ອງຄືໃຫ້ການອະພັຍໂທດທີ່ບໍ່ມີຂອບເຂດຈຳກັດແກ່ຜູ້ອື່ນໆເຫມືອນກັນ.

ການສາມັກຄີທັມກັບພຣະບິດາກະສັດແຫ່ງສວັນຂອງພວກເຮົາແລະພຣະຜູ້ເປັນເຈົ້າແມ່ນຂຶ້ນກັບການຍອມຝຶກແອບການໃຫ້ອະພັຍໂທດແກ່ຄົນອື່ນໆ. ເມື່ອໃດກໍຕາມທີ່ພວກເຮົາບໍ່ເຕັມໃຈຍົກໂທດໃຫ້ຄົນອື່ນແລ້ວ, ພວກເຮົາກໍເປັນຜູ້ທັກຫລັງຕໍ່ການອະພັຍໂທດທີ່ພວກເຮົາໄດ້ປະສົບການຜ່ານພຣະຄຣິດ. ການໃຫ້ອະ

ພັຍບໍ່ໄດ້ແມ່ນລຶບລ້າງໂທດກັມຂອງບາບອອກໄປສເມີ. ການອະພັຍໃຫ້ແມ່ນແນ່ນອນທີ່ສຸດວ່າບໍ່ແມ່ນການແກ້ຕົວຈາກຄວາມບາບ. ຫລືບໍ່ແມ່ນຜູ້ທີ່ຖືກເຄາະກັມຈຳເປັນຕ້ອງໃຫ້ອະພັຍ ແຕ່ວ່າມັນເຮັດໃຫ້ຄົນທີ່ໃຫ້ອະພັຍມີເສຣີພາບ. ຖ້າບໍ່ດັ່ງນັ້ນ, ພວກເຮົາຍັງຈະຖືກກັກຕົວແລະປິດບັງບໍ່ໃຫ້ພວກເຮົາມີທາງຕິດຕໍ່ກັບພຣະເຈົ້າໄດ້ເພາະການຂາດຄວາມເມດຕາກະຣຸນາຂອງພວກເຮົາ.

## ບົດຮຽນຊີວິດ

ການອະພັຍໂທດທີ່ບໍ່ມີຂອບເຂດຈຳກັດຂອງພຣະເຈົ້າແກ່ພວກເຮົາ ໄດ້ຮຽກຮ້ອງໃຫ້ພວກເຮົາອະພັຍແກ່ຄົນອື່ນໂດຍບໍ່ມີຂອບເຂດຈຳກັດ.ພຣະເຢຊູໃຊ້ເຣື່ອງຂ້າໃຊ້ທີ່ບໍ່ຍອມໃຫ້ອະພັຍແກ່ຜູ້ອື່ນເພື່ອສະແດງໃຫ້ເຫັນວ່າການໃຫ້ອະພັຍບໍ່ແມ່ນກ່ຽວກັບການຕັດສິນໃຈຂອງພວກເຮົາວ່າຄວນພຽງພໍຫລືບໍ່, ແຕ່ວ່າມັນກ່ຽວກັບສິ່ງທີ່ພຣະເຈົ້າໄດ້ກະທຳສຳລັບພວກເຮົາ ພວກເຮົາສາມາດນຳເອົາບົດຮຽນທີ່ພຣະເຢຊູໄດ້ສອນໄວ້ມາໃຊ້ຢ່າງໃດ?

- ເອົາປະສົບການຂອງການຍົກໂທດທີ່ບໍ່ມີຂອບເຂດຂອງພຣະເຈົ້າຕໍ່ທຸກໆຄົນໂດຍຜ່ານອົງພຣະເຢຊູຄຣິດ.
- ຈົດຈຳໄວ້ສເມີວ່າການຍົກໂທດຂອງພວກເຮົາບໍ່ໄດ້ຂຶ້ນກັບການກະທຳບຸນຂອງພວກເຮົາ,ແຕ່ຂຶ້ນກັບພຣະຄຸນຂອງພຣະເຈົ້າທັງຫມົດ.
- ສົມທຽບມາດຕະຖານບຸນຄຸນອັນຫລວງຫລາຍຂອງພວກເຮົາກັບມາດຕະຖານຂອງພຣະເຈົ້າ.
- ບັງຄັບນິສັຍຂອງພວກເຮົາເອງຕໍ່ການໃຫ້ອະພັຍ, ບໍ່ວ່າຜູ້ທີ່ກໍ່ເຣື່ອງຈະເປັນໃຜກໍຕາມ, ຫລືຈະຢູ່ໃສກໍຕາມ.
- ມອງໃຫ້ເຫັນຈຸດອ່ອນທີ່ບໍ່ເຕັມໃຈຝຶກແອບການໃຫ້ອະພັຍຊຶ່ງຈະກັກຂັງແລະທໍຣະມານຕໍ່ຄວາມຂຸ່ນເຄືອງໃຈ, ບໍ່ແມ່ນຜູ້ເຮັດຜິດນັ້ນ.

ມີສອງຄອບຄົວທີ່ຖືກຄົນຮ້າຍຂ້າສະມາຊິກໃນຄອບຄົວແລ້ວຄົນຮ້າຍກໍຖືກຈັບ, ຂຶ້ນສານ, ແລະຖືກຕັດສິນຈຳຄຸກ. ຄອບຄົວນຶ່ງບອກວ່າພວກເຂົາຍົກໂທດໃຫ້ຄົນຮ້າຍຜູ້ນັ້ນ. ອີກຄອບຄົວນຶ່ງກໍປະກາດຢ່າງ ເປີດແປນເຖິງຄວາມຄຽດແຄ້ນຕໍ່ຜູ້ຮ້າຍຄົນນັ້ນທີ່ໄດ້ກະທຳຕໍ່ສະມາຊິກທີ່ແສນຮັກໃນຄອບຄົວຂອງພວກເຂົາແລະຄົງຈະບໍ່ມີວັນໃຫ້ອະພັຍໄດ້.

ຄອບຄົວທີ່ໃຫ້ການຍົກໂທດນັ້ນສາມາດເວົ້າເຖິງເຣື່ອງການສູນເສັຽນັ້ນຢ່າງບໍ່ມີຄວາມຂົມຂື່ນແລະບໍ່ມີຄວາມໂມໂຫ. ພວກເຂົາດຳເນີນຊີວິດຢ່າງມີຫມາກຜົນແລະຫວິດຈາກເຣື່ອງໃນອະດີດ. ອີກຄອບຄົວນຶ່ງບໍ່ໄດ້ເປັນດັ່ງນັ້ນເລີຍ,ເມື່ອໃດກໍຕາມທີ່ພວກເຂົາເວົ້າເຣື່ອງຜູ້ຮ້າຍທີ່ໄດ້ກະທຳຕໍ່ສະມາຊິກຄອບຄົວຄວາມໂມໂຫຂຸ່ນເຄືອງໃຈກໍປາກົດອອກໃຫ້ເຫັນ. ພວກເຂົາ ຍັງໃຈຮ້າຍໃຫ້ຄອບຄົວທີ່ຍົກໂທດໃຫ້ຜູ້ຮ້າຍນັ້ນດ້ວຍພວກເຂົາຍັງມີຄວາມຄຽດຮ້າຍຕໍ່ຄົນຮ້າຍນັ້ນມາເປັນເວລາຫລາຍໆປີ. ຊີວິດຂອງພວກເຂົາເຕັມໄປດ້ວຍຄວາມອິນລະຫີນວຸ້ນວາຍ, ແລະສາຍສັມພັນຂອງພວກເຂົາກໍແຕກສລາຍມີການຢ່າຮ້າງເກີດຂຶ້ນເນື່ອງດ້ວຍການຂາດການໃຫ້ອະພັຍ. ພວກເຂົາໄດ້ຖືກກັກຂັງຫລາຍເທົ່າທຽມກັບຄົນຮ້າຍຂ້າຄົນຜູ້ນັ້ນ. ພວກເຂົາຖືກກັກຂັງໄວ້ໃນຄວາມຣະທົມຂົມຂື່ນ.